ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ - ແຟັກ: 021 418 062 – 6

ນະຄອນຫຼວງວຽງຈັນ, ວັນທີ 12/05/2021

ແຈ້ງການ

ສະບັບທີ 5/2021

ເຖິງ: ທ່ານຜູ້ຖືຮຸ້ນ ແລະ ລູກຄ້າ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ທີ່ນັບຖື

ເລື່ອງ: ມາດຕະການຊ່ວຍເຫຼືອລູກຄ້າຂອງບໍລິສັດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງການມາຍັງທ່ານ ຜູ້ຖືຮຸ້ນ ແລະ ລູກຄ້າຂອງບໍລິສັດ ໃນສະຖານະການ ການແຜ່ລະບາດຂອງພະຍາດປອດອັກເສບຮຸນແຮງ (COVID-19) ຮອບ2 ທີ່ໄດ້ສົ່ງຜົນກະທົບໃຫ້ກັບປະຊາຊົນລາວ ທົ່ວປະເທດ. ດັ່ງນັ້ນ, ບໍລິສັດ ຈຶ່ງໄດ້ກຳນົດມາດຕະການໃຫ້ການຊ່ວຍເຫຼືອລູກຄ້າຜູ້ໄດ້ຮັບຜົນກະທົບ ເພື່ອບັນເທົາຄວາມເດືອດຮ້ອນຂອງລູກຄ້າດັ່ງນີ້:

1. ຫຼຸດອັດຕາຜ່ອນຊຳລະເງິນຄ່າງວດ 50% ຂອງຄ່າງວດປະຈຳເດືອນຂອງສັນຍາເກົ່າເປັນການຊົ່ວຄາວ ຫຼື ຕາມຜົນກະທົບ ແລະ ຄວາມສາມາດໃນການຜ່ອນຊຳລະຂອງລູກຄ້າ
2. ປັບໂຄງສ້າງໜີ້ ໂດຍການເຮັດສັນຍາໃໝ່ ຄູ່ສັນຍາຕາມສັນຍາເກົ່າຕົກລົງຮ່ວມກັນໃນການຈັດເຮັດສັນຍາໃໝ່ຂຶ້ນທົດແທນສັນຍາເກົ່າ ເພື່ອຂະຫຍາຍໄລຍະເວລາ ຕະຫຼອດຈົນຈຳນວນເງິນທີ່ຜ່ອນຊຳລະໃນແຕ່ລະເດືອນໃໝ່ ຕາມຄວາມສາມາດໃນການຊຳລະຂອງລູກຄ້າ
3. ໂດຍບໍ່ມີຄ່າໃຊ້ຈ່າຍໃດໆໃນການດຳເນີນການ
4. ໄລຍະເວລາການຊ່ວຍເຫຼືອລູກຄ້າສິ້ນສຸດພາຍໃນວັນທີ 31 ພຶດສະພາ 2021
5. ບໍລິສັດ ສະຫງວນສິດທີ່ຈະຍົກເລີກ, ປ່ຽນແປງເງື່ອນໄຂ ຫຼື ມີສິດໃນການພິຈາລະນາອະນຸມັດການຊ່ວຍເຫຼືອຂອງບໍລິສັດ ໂດຍບໍ່ຕ້ອງບອກກ່າວລ່ວງໜ້າ ແລະ ໃຫ້ຖືການພິຈາລະນາຂອງບໍລິສັດ ເປັນທີ່ສິ້ນສຸດຈະຮຽກຮ້ອງໃດໆບໍ່ໄດ້
6. ຊ່ອງທາງການຕິດຕໍ່ ລູກຄ້າສາມາດພົວພັນໄດ້ທີ່ ພະແນກ ເກັບ ແລະ ບໍລິການໜີ້ ສອບຖາມຂໍ້ມູນເພີ່ມເຕີມ ເບີໂທ 021 418201

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານເພື່ອຮັບຊາບດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຜູ້ອຳນວຍການໃຫຍ່

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານົບ ຕຣິລົດວິໄລ)